# ຕາຍແລ້ວໄປໃສ?

## ສະຫວັນ, ນະລົກ, ຫລື, ວ່າງເປົ່າ?

ໃນຊ່ວງເວລາທ້າຍໆຂອງປີ 1999 ທຸກຄົນຕ່າງກໍມີຄວາມຕື່ນເຕັ້ນທີ່ປີ 2000 ໃກ້ເຂົ້າມາແລ້ວ ສື່ຕ່າງໆບໍ່ວ່າຈະເປັນທໍລະທັດຫລືໜັງສືພິມ ໄດ້ສະເໜີຂ່າວກ່ຽວກັບບຸກຄົນແລະເຫດການທີ່ຍິ່ງໃຫຍ່ທີ່ສຸດແຫ່ງສັດຕະວັດ ຂ້າພະເຈົ້າມີຄຳຖາມມາຖາມພີ່ນ້ອງ ແລະກ່ອນຈະຕອບຢາກຈະໃຫ້ພີ່ນ້ອງຄິດທົບທວນໃຫ້ດີເສຍກ່ອນ ພີ່ນ້ອງຄິດວ່າແມ່ນຫຍັງທີ່ເປັນເຫດການທີ່ຍິ່ງໃຫຍ່ທີ່ສຸດທີ່ໄດ້ເກີດຂຶ້ນນັບຕັ້ງແຕ່ມີການເນລະມິດສ້າງໂລກ? ມັນແມ່ນການປະສູດຂອງພະເຍຊູຄຣິດບໍ? ມັນແມ່ນການຕຶງພະເຍຊູທີ່ໄມ້ກາງແຂນບໍ? ມັນແມ່ນການຟື້ນຄືນພະຊົນຂອງພະເຍຊູຄຣິດບໍ?

ໝົດເວລາ

ໃຫ້ເຮົາມາເບິ່ງນຳກັນວ່າ ມີຈັກຄົນທີ່ຕອບໜຶ່ງໃນຄຳຕອບຂ້າງເທິງນີ້ ມີໃຜແນ່ທີ່ຄິດວ່າ ມັນແມ່ນການປະ-ສູດຂອງພະເຍຊູຄຣິດ? ມີໃຜແນ່ທີ່ຄິດວ່າ ມັນແມ່ນການຕຶງພະເຍຊູທີ່ໄມ້ກາງແຂນ? ມີໃຜແນ່ທີ່ຄິດວ່າການຟື້ນຄືນພະຊົນຂອງພະເຍຊູຄຣິດແມ່ນເຫດການທີ່ຍິ່ງໃຫຍ່ທີ່ສຸດ? ພີ່ນ້ອງຈະໃຫ້ເຫດຜົນສຳລັບຄຳຕອບພີ່ນ້ອງວ່າແນວໃດ? ບາງຄົນອາດຈະຖຽງຢ່າງຕາດຳຕາແດງວ່າ ການປະສູດຂອງພະເຍຊູແມ່ນເຫດການທີ່ສຳຄັນທີ່ສຸດ ເພາະວ່າຖ້າພະອົງບໍ່ໄດ້ລົງມາປະສູດ ພວກເຮົາກໍຈະບໍ່ມີພະຜູ້ຊ່ອຍໃຫ້ລອດ

ບາງຄົນກໍອາດຈະເວົ້າວ່າ ການຕາຍແທນທີ່ໄມ້ກາງແຂນຂອງພະເຍຊູແມ່ນເຫດການທີ່ສຳຄັນທີ່ສຸດ ຖ້າບໍ່ດັ່ງນັ້ນ ພວກເຮົາໝົດທຸກຄົນຈະຕ້ອງໄດ້ຮັບໂທດ ແລະອີກຫລາຍໆຄົນກໍອາດຈະເວົ້າວ່າ ການຟື້ນຄືນພະຊົນແມ່ນເຫດການທີ່ສຳຄັນທີ່ສຸດ ເພາະວ່າຖ້າບໍ່ມີການຟື້ນຄືນພະຄົນ ພວກເຮົາກໍບໍ່ມີຄວາມຫວັງຫຍັງຫລັງຈາກຄວາມຕາຍ

ຄຳຖາມນີ້ກໍຄ້າຍຄືກັບຄຳຖາມທີ່ວ່າ "ລະຫວ່າງຫົວ ແລະຫົວໃຈ ແມ່ນອັນໃດທີ່ສຳຄັນກວ່າກັນ?" ທັງສອງອະໄວຍະວະມີຄວາມຈຳເປັນແກ່ການມີຊີວິດ ແລະຄຳຖາມທີ່ພວກເຮົາໄດ້ສົນທະນາກັນກໍຄ້າຍໆຄືກັນນີ້ ຢ່າງໃດກໍຕາມ ການຟື້ນພະຊົນຂອງພະຄຣິດເປັນເຫດການທີ່ສຳຄັນທີ່ພິສູດວ່າ ພະອົງເປັນຜູ້ທີ່ພະອົງອ້າງວ່າພະອົງເປັນ ນັ້ນກໍຄື ພະບຸດຂອງພະເຈົ້າ ພະເມຊີຢາ ແລະພະບິດາຂອງພະອົງໄດ້ຮັບເອົາຂອງຖະຫວາຍບູຊາຂອງພະອົງໃນຖານະຕົວແທນຂອງພວກເຮົາ ມັນແມ່ນການຟື້ນພະຊົນຂອງພະອົງທີ່ໄດ້ພິສູດໃຫ້ເຫັນວ່າ ພະອົງຊົງມີໄຊຊະນະເໜືອຄວາມຕາຍ

ໃນໜັງສື ພະນິມິດ ພະອົງໄດ້ກ່າວວ່າ (ພະນິມິດ 1:18) "ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ໋, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ"

ເມື່ອພວກຜູ້ນຳສາດສະໜາໄດ້ເຂົ້າມາຖາມພະອົງໃຫ້ວ່າອັນໃດເປັນໝາຍສຳຄັນທີ່ບອກວ່າພະອົງເປັນຜູ້ທີ່ພະອົງອ້າງວ່າພະອົງເປັນ ໝາຍສຳຄັນດຽວທີ່ພະອົງຕອບພວກເຂົາກໍຄື ການຟື້ນພະຊົນຂອງພະອົງ. ພວກຢິວຈຶ່ງທູນພຣະອົງວ່າ, (ໂຢຮັນ 2:18,19) "ເຈົ້າຈະສະແດງການສຳຄັນອັນໃດໃຫ້ພວກເຮົາເຫັນວ່າ ເຈົ້າມີສິດເຮັດການຢ່າງນີ້" ພຣະເຢຊູຊົງຕອບເຂົາວ່າ, "ຖ້າມ້າງວິຫານນີ້ລົງເສັຽ ເຮົາຈະສ້າງຂຶ້ນໃຫມ່ໃນສາມວັນ" ພະອົງໄດ້ກ່າວເຖິງໝາຍສຳຄັນນີ້ຊ້ຳອີກ ພະອົງໄດ້ກ່າວວ່າ ພະອົງຈະຖືກເຂົ່າຂ້າ ແລະພະອົງຈະເປັນຄືນມາຈາກຕາຍໃນວັນທີສາມ. ພວກຜູ້ນຳສາດສະໜາໄດ້ຈົດຈຳຄຳທີ່ພະເຢຊູໄດ້ພະຍາກອນວ່າພະອົງຈະເປັນຄືນມາຈາກຕາຍ ແລະພວກເຂົາຈຶ່ງໄປຫາພວກຜູ້ນຳຂອງໂຣມ ແລະກ່າວວ່າ (ມັດທາຍ 27:63,64) "ທ່ານທີ່ນັບຖື, ພວກອາຕະມາຈື່ຈຳໄດ້ວ່າຄົນຫລອກລວງຜູ້ນັ້ນ ເມື່ອຍັງມີຊີວິດຢູ່ ເຂົາໄດ້ເວົ້າວ່າ, 'ພາຍຫລັງສາມວັນແລ້ວເຮົາຈະເປັນຄືນມາ' ດ້ວຍເຫດນັ້ນຂໍທ່ານບັນຊາສັ່ງໃຫ້ເຝົ້າອຸບໂມງໄວ້ຢ່າງແຂງແຮງຈົນເຖິງວັນຖ້ວນສາມ ຢ້ານວ່າພວກສາວົກຂອງມັນຈະມາລັກເອົາສົບໄປແລ້ວຈະກ່າວຕໍ່ພົລເມືອງວ່າ 'ທ່ານເປັນຄືນມາຈາກຕາຍແລ້ວ' ການຫລອກລວງຄັ້ງສຸດທ້າຍນີ້ຈະຮ້າຍແຮງກວ່າຄັ້ງກ່ອນ" ພວກເຂົາຢ້ານວ່າພະສົບຂອງພະເຢຊູຈະຫາຍໄປ ແລະມັນກໍຈະເບິ່ງຄືວ່າ ພະຄຣິດໄດ້ເປັນຂຶ້ນມາ

ຕໍ່ມາປີລາດໄດ້ສົ່ງທະຫານຍາມໄປຍາມອຸໂມງ ແລະພວກເຂົາກໍປະທັບຕາແຫ່ງອານາຈັກໂຣມໃສ່ອຸໂມງໄວ້ ບໍ່ມີໃຜສາມາດເອົາພະສົບຂອງພະອົງອອກມາໄດ້ ບໍ່ມີໃຜນອກຈາກພະບິດາຂອງພະອົງ ໃນຕອນເຊົ້າມືດຂອງວັນອາທິດ ທູດສະຫວັນໄດ້ລົງມາຈາກສະຫວັນແລະໄດ້ກິ້ງຫີນທີ່ປິດປາກອຸໂມງອອກ ທູດສະຫວັນໄດ້ຮ້ອງພະຄຣິດໃຫ້ອອກມາ ພະຜູ້ຊ່ອຍໃຫ້ລອດໄດ້ເປັນຂຶ້ນມາ ພະອົງໄດ້ມີໄຊຊະນະເໜືອຄວາມຕາຍ ພະອົງເປັນຜູ້ພິຊິດຄວາມຕາຍ ສະງ່າລາສີຂອງທູດສະຫວັນໄດ້ເຮັດໃຫ້ພວກທະຫານໄດ້ລົ້ມລົງເໝືອນກັບຄົນຕາຍ ການຟື້ນພະຊົນຂອງພະຄຣິດໄດ້ເປັນພະລັງຄ້ຳຊູໃຈໃຫ້ຄຣິສຕຽນໃນຊ່ວງເວລາຕົ້ນໆ ໃນຂະນະທີ່ຄົນໂຣມມັນບໍ່ມີຄວາມຫວັງອັນໃດຢູ່ຫລັງຫລຸມຝັງສົບຫລືຫລັງຄວາມຕາຍ ສິ່ງດຽວທີ່ພວກເຂົາຮູ້ນັ້ນກໍຄື ຫລຸມຝັງສົບເປັນເຫວມືດເລິກ ແລະກໍບໍ່ມີໃຜທີ່ສາມາດຫວັງວ່າຈະມີຊີວິດໃນຫລຸມຝັງສົບ ດຽວນີ້ຄຣິດຕຽນມີຂໍ້ຄວາມແຫ່ງຄວາມຫວັງ ນັ້ນກໍຄື ການມີຊີວິດຢູ່ຫລັງຫລຸມຝັງສົບ ສຸສານໄຕ້ດິນທີ່ຢູ່ໄຕ້ກຸງໂຣມໄດ້ສະແດງໃຫ້ເຫັນເຖິງຄວາມແຕກຕ່າງລະຫວ່າງຄວາມຕາຍຂອງຄົນທີ່ບໍ່ແມ່ນຄຣິສຕຽນແລະຄວາມຕາຍຂອງຄົນຄຣິດຕຽນ ໃຫ້ເຮົາມາສັງເຫດເບິງຄຳຂຽນທີ່ໄດ້ຂຽນໄວ້ເທິງຫລຸມຝັງສົບຂອງຄົນທີ່ບໍ່ແມ່ນຄຣິສຕຽນທີ່ຕາຍໄປໂດຍບໍ່ມີຄວາມຫວັງ "ລາກ່ອນຊົ່ວນິລັນ ຫລື ລາກ່ອນຕະຫລອດໄປ" ບັດນີ້ໃຫ້ເຮົາມາສັງເກດເບິ່ງຄຳຂຽນທີ່ໄດ້ຂຽນໄວ້ເທິງຫລຸມຝັງສົບຂອງຄຣິສຕຽນ "ລາກ່ອນຈົນກວ່າເຮົາຈະພົບກັນໃໝ່ ຫລື ເຮົາລາກັນໃນຕອນກາງຄືນ ຕື່ນເຊົ້າມາເຮົາຈະພົບກັນໃໝ່" ຫລຸມຝັງສົບຂອງເຂົາໄດ້ມີຂໍ້ຄວາມແຫ່ງຄວາມຫວັງແລະກຳລັງໃຈ ແລະຊີ້ໄປເຖິງວັນຟື້ນຄືນຊີບ.

(ພະນິມິດ 1:18) "ເຮົາໄດ້ຕາຍແລ້ວ ແຕ່ເບິ່ງແມ່, ເຮົາກໍມີຊີວິດຢູ່ຕລອດໄປເປັນນິດ ແລະເຮົາຖືຂໍກະແຈແຫ່ງຄວາມຕາຍແລະແຫ່ງແດນມໍຣະນາ" ບໍ່ມີຄວາມຫວັງອັນແທ້ຈິງຢູ່ຫລັງຫລຸມຝັງສົບ ຖ້າພະຄຣິດບໍ່ເປັນພະຜູ້ຊ່ອຍໃຫ້ລອດຂອງເຮົາ ໃຫ້ເຮົາມາສັງວ່າພະເຍຊູໄດ້ວ່າແນວໃດ (1 ໂກຣິນໂທ 15:16-18) "ເພາະ-ວ່າຖ້າຄົນຕາຍບໍ່ເປັນຄືນມາ ເຖິງແມ່ນພຣະຄຣິດກໍບໍ່ໄດ້ຖືກຊົງບັນດານໃຫ້ຄືນພຣະຊົນ ແລະຖ້າວ່າພຣະຄຣິດບໍ່ໄດ້ຖືກຊົງບັນດານໃຫ້ຄືນພຣະຊົນແລ້ວ ຄວາມເຊື່ອຂອງເຈົ້າທັງຫລາຍກໍໄຮ້ປໂຍດ ເຈົ້າທັງຫລາຍກໍຍັງຄົງຢູ່ໃນຜິດບາບຂອງຕົນ ຊໍ້າກວ່ານັ້ນ, ພວກຄົນເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວນັ້ນກໍຈິບຫາຍໄປດ້ວຍ"

ເພື່ອທີ່ຈະເຂົ້າວ່າເປັນຫຍັງພະອົງຈຶ່ງກ່າວໃນສິ່ງທີ່ພະອົງໄດ້ກະທຳ ພວກເຮົາຕ້ອງເຂົ້າໃຈສິ່ງທີ່ພະຄຳພີໄດ້ສອນກ່ຽວກັບຄວາມຕາຍ ເມື່ອພະເຈົ້າສ້າງມະນຸດ ພະອົງບໍ່ໄດ້ປະສົງໃຫ້ມະນຸດຄົນໃດຕ້ອງຕາຍ ເມື່ອສ້າງອາດາມແລ້ວ ພະອົງກໍຊົງພິນິດເບິ່ງ ແລະພະຄຳພີໄດ້ກ່າວໃນ ປະຖົມມະການ 1:32 ວ່າ ທຸກສິ່ງທຸກຢ່າງບໍ່ພຽງແຕ່ດີຫລາຍເທົ່ານັ້ນ ແຕ່ມັນດີເລີດ (perfect) ກ່ອນເວລາທີ່ອາດາມແລະເອວາໄດ້ເຮັດບາບ ຄວາມຕາຍ ຄວາມເຈັບປ່ວຍ ຫລືຄວາມໂສກເສົ້າບໍ່ມີຢູ່ໃນໂລກ

ພຣະອົງຊົງສັ່ງແກ່ຊາຍຜູ້ນັ້ນວ່າ, (ປະຖົມມະການ 2:16-17) "ຫມາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ຫມົດ ເວັ້ນໄວ້ແຕ່ກົກທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນຫມາກໄມ້ໃນກົກນີ້ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ" ຕໍ່ມາເລື່ອງທີ່ບໍ່ຄ່ອຍດີກໍເລີ່ມກ້າວເຂົ້າມາ ເລື່ອງທີ່ໂສກເສົ້າທີ່ໄດ້ບັນທຶກໄວ້ໃນໜັງສືປະຖົມມະການ 3 ກໍຄື ພະຍາມານເຊິ່ງມາໃນຮູບຂອງງູໄດ້ມາປາກົດແກ່ເອວາ ແລະໄດ້ຫລອກຫລວງນາງບໍ່ໃຫ້ເຊື່ອຟັງພະເຈົ້າ ແລະໃຫ້ກິນໝາກໄມ້ທີ່ພະອົງສັ່ງຫ້າມບໍ່ໃຫ້ກິນ. ເມື່ອເອວາເວົ້າກັບງູວ່າ ພະເຈົ້າໄດ້ບອກລາວບໍ່ໃຫ້ກິນໝາກໄມ້ທີ່ພະອົງຊົງຫ້າມ ຖ້າບໍ່ດັ່ງນັ້ນລາວຈະຕາຍ ງູນັ້ນໄດ້ຕອບວ່າ (ປະຖົມມະການ 3:4) "ບໍ່ເປັນຄວາມຈິງ, ພວກເຈົ້າຈະບໍ່ຕາຍດອກ" ນີ້ແມ່ນບົດຫລອກລວງທຳອິດກ່ຽວກັບການຕາຍທີ່ພະຄຳໄດ້ບັນທຶກໄວ້!

ເອວາໄດ້ເລືອກທີ່ຈະເຊື່ອງູ ແລະກິນໝາກໄມ້ຈາກຕົ້ນໄມ້ແຫ່ງຄວາມຮູ້ຖືກຮູ້ຜິດ ພະເຈົ້າຈຳເປັນຕ້ອງແຍກອາດາມແລະອາເອວາອອກຈາກຕົ້ນໄມ້ແຫ່ງຊີວິດ

ເພາະວ່າ (ປະຖົມມະການ 3:22) "ບັດນີ້ ມະນຸດໄດ້ກາຍເປັນເຫມືອນພວກເຮົາໄດ້ຮູ້ຈັກການດີ ແລະການຊົ່ວ" (ປະຖົມມະການ 3:23) "ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຂັບໄລ່ເຂົາອອກຈາກສວນເອເດນ ໃຫ້ເຮັດວຽກຂຸດດິນຟັນໄມ້ ແລະທຳມາຫາກິນໃນດິນບ່ອນທີ່ກຳເນີດມາ"

ຄວາມຕາຍໄດ້ມີແກ່ມະນຸດຍ້ອນມະນຸດໄດ້ຖືກແຍກອອກຈາກພະເຈົ້າ ຜູ້ເປັນທີ່ມາແຫ່ງຊີວິດແລະຕົ້ນໄມ້ແຫ່ງຊີວິດ ພະເຈົ້າໄດ້ກ່າວແກ່ອາດາມໃນເວລານັ້ນວ່າ: (ປະຖົມມະການ 3:19) "ເຈົ້າຈະຕ້ອງຫາລ້ຽງຊີບດ້ວຍເຫື່ອໄຫລໄຄຍ້ອຍ ຈົນກວ່າເຈົ້າຈະສິ້ນຊີວິດກັບຄືນໄປສູ່ດິນບ່ອນທີ່ເຈົ້າມາ ເຈົ້າມາແຕ່ດິນ ເຈົ້າຈະຕ້ອງກັບໄປໃນດິນອີກ" ນີ້ຄືກຸນແຈທີ່ຈະຊ່ອຍໃຫ້ເຂົ້າໃຈວ່າຄວາມຕາຍແມ່ນຫຍັງ ແລະພະເຈົ້າໄດ້ມີແຜນ-ການຫຍັງທີ່ຈະຊ່ອຍພວກເຮົາໃຫ້ອອກຈາກການຖືກແບ່ງແຍກອັນລັບຈາກພະອົງ ພະຄຳພີໄດ້ກ່າວວ່າ ມະ-ນຸດຈະຕ້ອງກັບຄືນໄປເປັນດິນບ່ອນເຊິ່ງມະນຸດໄດ້ອອກມານັ້ນ ພີ່ນ້ອງຢ່າລືມວ່າພະເຈົ້າໄດ້ສ້າງອາດາມມາຈາກດິນ

(ປະຖົມມະການ 2:7) "ເມື່ອນັ້ນ ພຣະຜູ້ເປັນເຈົ້າໄດ້ເອົາດິນມາປັ້ນເປັນຮູບຄົນແລ້ວເປົ່າລົມຫາຍໃຈໃສ່ຮູ-ດັງໃຫ້ມີຊີວິດ ຮູບປັ້ນນັ້ນກໍກັບກາຍເປັນຄົນທີ່ມີຊີວິດຈິດໃຈ" ພະເຈົ້າໄດ້ເອົາດິນມາປັ້ນເປັນຮູບຄົນ ແຕ່ວ່າໃນຕອນທຳອິດນັ້ນ ຄົນຍັງເປັນພຽງຮູບຮ່າງຄົນຊື່ໆ ລາວບໍ່ມີຊີວິດຈິດໃຈຫຍັງ ພະຄຳພີໄດ້ກ່າວວ່າ ພະເຈົ້າໄດ້ເປົ່າລົມຫາຍໃຈແຫ່ງຊີວິດໃສ່ຮູດັງຂອງອາດາມ ແລ້ວອາດາມກໍກາຍເປັນຄົນທີ່ມີຊີວິດຈິດໃຈ ໃຫ້ເຮົາມາເບິ່ງສູດນີ້ນຳກັນ

ຮ່າງກາຍ+ລົມຫາຍໃຈ = ຈິດວິນຍານທີ່ມີຊີວິດ
ຫລືກໍລະນີແຫ່ງຄວາມຕາຍ ພວກເຮົາສາມາດຂຽນສູດໄດ້ດັ່ງນີ້
ຮ່າງກາຍ-ລົມຫາຍໃຈ= ສົບ
ນັ້ນແມ່ນສິ່ງທີ່ຜູ້ມີປັນຍາໄດ້ກ່າວໄວ້ໃນພະທຳປັນຍາຈານ

(ປັນຍາຈານ 12:7) "ແລະຜົງຂີ້ດິນກັບເປັນດິນຢ່າງເດີມ ແລະຈິດວິນຍານກັບໄປສູ່ພຣະເຈົ້າຜູ້ປະທານໃຫ້ມານັ້ນ"

ໂຢບໄດ້ກ່າວວ່າ: (ໂຢບ 27:3-4) "ເພາະລົມຫາຍໃຈຍັງຢູ່ໃນຕົວຂ້າພະເຈົ້າຕາບໃດ ແລະລົມປານຈາກພຣະເຈົ້າຍັງຢູ່ໃນຮູດັງຂອງຂ້າພະເຈົ້າຕາບໃດ ຮີມຝີປາກຂອງຂ້າພະເຈົ້າຈະບໍ່ເວົ້າຄວາມເທັດ ແລະລີ້ນຂອງຂ້າພະເຈົ້າຈະບໍ່ເປັ່ງຄຳຫລອກລວງ"

(ເພງສັນລະເສີນ 146:3,4) "ຂໍທ່ານຢ່າໄວ້ເນື້ອເຊື່ອໃຈນຳພວກເຈົ້ານາຍທັງຫລາຍ ຄືມະນຸດທີ່ບໍ່ອາດຈະຊ່ອຍທ່ານໃຫ້ພົ້ນພັຍໄດ້ ເວລາເຂົາຕາຍ ເຂົາກໍກັບຄືນເປັນຂີ້ຝຸ່ນດິນ ໃນວັນນັ້ນແຜນການທຸກຢ່າງກໍຈະເຖິງຈຸດຈົບ"

ກະສັດດາວິດໄດ້ກ່າວວ່າ ເມື່ອລົມຫາຍໃຈອອກຈາກຮ່າງກາຍ ແລະຮ່າງກາຍກັບຄືນໄປສູ່ດິນບ່ອນທີ່ຮ່າງ-ກາຍມານັ້ນ ຄວາມນຶກຄິດຂອງຂອງມະນຸດກໍໝົດໄປ!

ກະສັດດາວິດໄວ້ກ່າວສອດຄ່ອງກັບກະສັດໄຊໂລໂມນ ເຊິ່ງພະອົງໄດ້ກ່າວວ່າ: (ປັນຍາຈານ 9:5,6) "ເພາະວ່າຄົນເປັນຍ່ອມຮູ້ວ່າເຂົາເອງຄົງຈະຕາຍ ແຕ່ຄົນຕາຍແລ້ວກໍບໍ່ຮູ້ອັນໃດເລີຍ ເຂົາບໍ່ໄດ້ຮັບຣາງວັນອີກ ດ້ວຍວ່າໃຜໆກໍພາກັນລືມເຂົາເສັຽຫມົດ ຄວາມຮັກຂອງເຂົາບໍ່ຫນ້ອຍກວ່າຄວາມຊັງ ແລະຄວາມອິດ-ສາຂອງເຂົາໄດ້ສາບສູນໄປຕາມກັນນານມາແລ້ວ ໃນບັນດາການທີ່ບັງເກີດຂຶ້ນພາຍໃຕ້ດວງອາທິດ ເຂົາທັງຫລາຍບໍ່ມີສ່ວນຮ່ວມອີກຕໍ່ໄປ"

ພວກເຂົາບໍ່ຮູ້ຫຍັງເລີຍ ຜູ້ຂຽນພະທຳເພງສັນລະເສີນໄດ້ກ່າວວ່າ ຄົນຕາຍບໍ່ໄດ້ຢູ່ໃນສະຫວັນຮ້ອງເພງສັນ-ລະເສີນພະເຈົ້າ ແລະພີ່ນ້ອງອາດຈະຖາມວ່າ ແລ້ວພວກເຂົາໄປຢູ່ໃສ? ກະສັດດາວິດໄດ້ກ່າວຂ້ອນຂ້າງແຈ້ງວ່າ: (ເພງສັນລະເສີນ 115:17) "ຄົນຕາຍບໍ່ສັຣເສີນພຣະຜູ້ເປັນເຈົ້າ ຫລືຜູ້ທີ່ລົງໄປສູ່ທີ່ສງັດກໍເຫມືອນກັນ"

(ໂຢບ 14:10,12,13) "ແຕ່ມະນຸດຕາຍແລ້ວແມ່ນໄປສູ່ຈຸດຈົບ ມະນຸດສິ້ນລົມຫາຍໃຈແລະເຂົາຢູ່ທີ່ໃດດັ່ງນັ້ນແຫລະ ມະນຸດກໍນອນລົງແລະບໍ່ລຸກຂຶ້ນອີກ ຈົນທ້ອງຟ້າບໍ່ມີອີກ ເຂົາກໍບໍ່ຕື່ນຂຶ້ນ ແລະປຸກເຂົາກໍບໍ່ໄດ້ໂອ ຫາກພຣະອົງຊົງເຊື່ອງຂ້າພຣະອົງໄວ້ໃນພິພົບຄົນຕາຍກໍຈະດີ ຢາກຈະໃຫ້ພຣະອົງຊົງປົກປິດຂ້າພຣະອົງໄວ້ຈົນພຣະພິໂຣດຂອງພຣະອົງພົ້ນໄປ ຢາກຈະໃຫ້ພຣະອົງຊົງກຳຫນົດເວລາໃຫ້ຂ້າພຣະອົງ ແລະຊົງລະຣຶກເຖິງຂ້າພຣະອົງ"

ໃນທີ່ນີ້ພວກເຮົາໄດ້ຮູ້ຈາກພະທຳທີ່ພະເຈົ້າໄດ້ກ່າວວ່າ ເມື່ອມະນຸດຕາຍ ພວກເຂົາຈະບໍ່ເປັນຂຶ້ນມາຈົນກວ່າຈະຮອດວັນແຫ່ງການຄືນຊີບ ໂຢບໄດ້ກ່າວວ່າ (ໂຢບ 14:14,15) "ຖ້າມະນຸດຕາຍແລ້ວ ເຂົາຈະມີຊີວິດອີກຫລື ຂ້າພຣະອົງຈະຄອຍຢູ່ຕລອດວັນ ປະຈຳການຂອງຂ້າພຣະອົງຈົນກວ່າການປົດປ່ອຍຂອງຂ້າພຣະອົງຈະມາເຖິງ ພຣະອົງຈະຊົງເອີ້ນ ແລະຂ້າພຣະອົງຈະທູນຕອບພຣະອົງ ..." ໂຢບໄດ້ບອກໃຫ້ພວກເຮົາຮູ້ວ່າ "ຖ້າຂ້າພະເຈົ້າຈະເບິ່ງພິພົບຄົນຕາຍໃຫ້ເປັນບ້ານຂອງຂ້າພະເຈົ້າ ຖ້າຂ້າພະເຈົ້າຈະກາງທີ່ນອນອອກໃນຄວາມມືດ"

ເຮົາຈະສັງເກດເຫັນວ່າ ໂຢບໄດ້ໃຊ້ຄຳວ່ານອນເມື່ອກ່າວເຖິງຄວາມຕາຍ ນີ້ກໍແມ່ນຄຳດຽວກັນທີ່ຜູ້ຂຽນພະຄຳພີຄົນອື່ນໆໄດ້ຂຽນ:

(ເພງສັນລະເສີນ 13:3) "ຂ້າແດ່ພຣະຜູ້ເປັນເຈົ້າຂອງຂ້າພຣະອົງ ຂໍຊົງຫລຽວເບິ່ງຂ້າພຣະອົງ ແລະຕອບຂ້າພຣະອົງດ້ວຍ ຂໍຊົງເພີ້ມຄວາມສວ່າງແກ່ຕາຂ້າພຣະອົງ ຢ້ານວ່າຂ້າພຣະອົງຈະຫລັບຢູ່ໃນຄວາມຕາຍ" ກະສັດດາວິດຢ້ານການນອນຫລັບໃນຄວາມຕາຍ ພະອົງຢາກມີພະຊົນຢູ່

ດານິເອນໄດ້ກ່າວວ່າຄົນຕາຍຈະເປັນຂຶ້ນມາໃນຊ່ວງເວລາສັ້ນໆກ່ອນກະສະເດັດມາຂອງພະຄຣິດ: (ດານິເອນ 12:2) "ຫລາຍຄົນໃນພວກເຫລົ່ານີ້ທີ່ໄດ້ຕາຍໄປແລ້ວຈະມີຊີວິດຄືນມາອີກ ລາງຄົນຈະມີຊີວິດຕລອດໄປບາງຄົນຈະໄດ້ຮັບຄວາມອັບອາຍຂາຍຫນ້າຕລອດໄປ"

ເມື່ອຄົນໃດໜຶ່ງຕາຍ ລາວຈະພັກຜ່ອນຢ່າງສະຫງົບ ບໍ່ມີປັນຫາຊີວິດໃດໆມາລົບກວນລາວ ແລະເມື່ອຜູ້ໃຫ້ຊີວິດສະເດັດມາລາວຈະເປັນຂຶ້ນມາ ມີບ່ອນອື່ນແນ່ບໍ່ທີ່ພະຄຳພີໄດ້ປຽບການຕາຍວ່າເປັນການນອນຫລັບ?

ຜູ້ປະກາດພະທຳນາທານໄດ້ກ່າວແກ່ກະສັດດາດວິດວ່າແມ່ນຫຍັງຈະເກີດຂຶ້ນກັບພະອົງເມື່ອພະອົງຕາຍ

(2 ຊາມູເອນ 7:12) "ເມື່ອເຈົ້າຕາຍໄປ ແລະຖືກຝັງໄວ້ກັບພວກບັນພະບຸຣຸດຂອງເຈົ້າ ..." ພະເຍຊູເອງໄດ້ຮ້ອງການຕາຍວ່າການນອນຫລັບ ພະອົງໄດ້ໃຊ້ຄຳວ່ານອນຫລັບອະທິບາຍເຖິງການຕາຍຂອງສະຫາຍພະອົງ ຄືລາຊະໂຣ. ມີເຮືອນຫລັງໜຶ່ງທີ່ເບັດທານີທີ່ພະເຍຊູໄດ້ຢ້ຽມຢາມເປັນປະຈຳ ນັ້ນຄືເຮືອນຂອງລາ-ຊະໂຣ ຂອງມາຣີເອ ແລະຂອງມາທາ. ມື້ໜຶ່ງໃນຂະນະທີ່ພະເຍຊູແລະສາວົກຂອງພະອົງກຳລັງຢູ່ເມືອງໜຶ່ງໃກ້ແມ່ນ້ຳຈໍແດນ ໄດ້ມີຄົນມາສົ່ງຂ່າວອັນຮີບດ່ວນໃຫ້ພະອົງວ່າ ລາຊະໂຣກຳລັງປ່ວຍໜັກ ແຕ່ພະເຍຊູກໍຍັງປະທັບຢູ່ທີ່ນັ້ນອີກສອງວັນ ພະເຍຊູໄດ້ກ່າວວ່າ (ໂຢຮັນ 11:11) "ລາຊະໂຣເພື່ອນຂອງເຮົາກໍຫລັບໄປແລ້ວ ແຕ່ເຮົາໄປເພື່ອຈະປຸກເຂົາໃຫ້ຕື່ນ" ພວກສາວົກຈຶ່ງທູນພຣະອົງວ່າ, (ໂຢຮັນ 11:12) "ນາຍເຈົ້າເອີຍ, ຖ້າຜູ້ປ່ວຍນອນຫລັບ ເຂົາກໍຄົງຈະດີປ່ວຍ" ເຫດສັນນີ້ພຣະເຍຊູຈຶ່ງຊົງບອກເຂົາໂດຍແຈ່ມແຈ້ງວ່າ, (ໂຢຮັນ 11:14-15) "ລາຊະໂຣຕາຍແລ້ວ ເຮົາຍິນດີທີ່ເຮົາບໍ່ໄດ້ຢູ່ທີ່ນັ້ນ ເພາະເຫັນແກ່ທ່ານທັງຫລາຍເພື່ອທ່ານທັງຫລາຍຈະໄດ້ເຊື່ອ ພວກເຮົາພາກັນໄປຫາເຂົາເທາະ" ພະອົງກັບສາວົກຈຶ່ງເຂົ້າໄປທີ່ເບັດທານີໃນຂະນະທີ່ເຂົ້າໄປໃນຕົວເມືອງ ນາງມາທາໄດ້ທູນພຣະເຍຊູວ່າ, (ໂຢຮັນ 11:21) "ນາຍເຈົ້າເອີຍ, ຖ້າທ່ານຢູ່ທີ່ນີ້ນ້ອງຊາຍຂອງຂ້ານ້ອຍກໍຄົງບໍ່ຕາຍ"ບໍ່ຕ້ອງສົງໃສເລີຍ ນາງໄດ້ເວົ້າຖືກແລ້ວ ແຕ່ພະເຍຊູໄດ້ມີແຜນການ ພະອົງໄດ້ຕອບນາງວ່າ (ໂຢຮັນ 11:23) "ນ້ອງຊາຍຂອງເຈົ້າຈະຄືນມາອີກ" ໃຫ້ເຮົາມາສັງ-ເກດນຳກັນວ່ານາງມາທາໄດ້ຕອບວ່າແນວໃດ (ໂຢຮັນ 11:24)..."ຂ້ານ້ອຍກໍຊາບແລ້ວວ່າ ເຂົາຈະເປັນຄືນມາອີກໃນເວລາຄືນມາ ເມື່ອວັນສຸດທ້າຍນັ້ນ" ມາທາກໍຕອບພະເຍຊູດ້ວຍຄວາມແນ່ໃຈວ່າ ລາວຈະເຫັນລາ-ຊະໂຣໃນວັນຟື້ນຄືນ (resurrection day) ເຊິ່ງເປັນວັນສຸດທ້າຍຂອງໂລກ

ຢ່າງໃດກໍຕາມ ໃນຕອນນັ້ນພະເຍຊູກໍາລັງຈະບອກໃຫ້ຮູ້ກ່ຽວກັບເຫດການນັ້ນ ຫລັງຈາກນັ້ນພະເຍຊູໄດ້ບອກພວກເຮົາຢ່າງແຈ່ມແຈ້ງວ່າ (ໂຢຮັນ 11:25) "ເຮົານີ້ແຫລະ, ເປັນເຫດໃຫ້ຄົນທັງປວງເປັນຄືນມາ ທັງເປັນຊີວິດ ຜູ້ທີ່ວາງໃຈເຊື່ອໃນເຮົາ ເຖິງແມ່ນວ່າຕາຍໄປແລ້ວກໍຍັງຈະມີຊີວິດຢູ່"

(ໂຢຮັນ 11:35) ໃນຂະນະທີ່ພະເຍຊູເດີນທາງມາຫາຫລຸມຝັງສົບຂອງລາຊະໂຣ ທ່ານໂຢຮັນໄດ້ບອກໃຫ້ພວກເຮົາຮູ້ວ່າ ພະເຍຊູຊົງກັນແສງ(ໃຫ້ເສຍນໍ້າຕາ) ພະອົງໄດ້ເສຍນໍ້າຕາບໍ່ແມ່ນຍ້ອນເພື່ອນລາຊະໂຣຂອງພະອົງ ພະອົງຮູ້ວ່າລາວຈະເປັນຄືນມາອີກ ພະອົງໄດ້ເສຍນໍ້າຕາຍ້ອນພະອົງເຫັນຄອບຄົວແລະໝູ່ເພື່ອນຂອງລາຊະໂຣທີ່ກໍາລັງໂສກເສົ້າ ແລະກໍລວມໄປເຖິງຄົນໃນຍຸກຕໍ່ໆມາທີ່ພວກເຮົາຈະໂສກເສົ້າເສຍໃຈຍ້ອນພວກເຂົາສູນເສຍຄົນທີ່ຮັກໄປ ພະເຍຊູໄດ້ບອກໃຫ້ເຂົາເອົາຕາປະທັບຫີນທີ່ປາກປະຕູອອກໄປ

ຫລັງຈາກໄດ້ຍິນຄໍາທີ່ພະເຍຊູສັ່ງ ມາທາໄດ້ຄັດຄ້ານວ່າ (ໂຢຮັນ 11:39) "ນາຍເຈົ້າເອີຍ, ປານນີ້ສົບມີກິ່ນເຫມັນແລ້ວ ເພາະເຂົາຕາຍໄດ້ສີ່ວັນແລ້ວ" ແມ່ນແລ້ວ ມັນແມ່ນສີ່ວັນ ພະເຍຊູໄດ້ລໍຖ້າໄກ້ແມ່ນໍ້າຈໍແດນສອງວັນ ແລະໃຊ້ເວລາຍ່າງມາເບັດທານີສອງວັນ

ຢ່າງໃດກໍຕາມຫີນທີ່ໜ້າປະຕູກໍຖືກກິ້ງອອກ ພະເຍຊູໄດ້ກ່າວດ້ວຍສຽງອັນດັງວ່າ ລາຊະໂລ ຈົ່ງອອກມາ! ບາງຄົນເວົ້າວ່າ ພະເຍຊູ ໄດ້ກ່າວເຈາະຈົງແຕ່ໃນກໍລະນີຂອງລາຊະໂຣເທົ່ານັ້ນ ຖ້າບໍ່ດັ່ງນັ້ນ ຫລຸມຝັງສົບທຸກຫລຸມໃນໂລກນີ້ກໍຄົງຖືກເປີດອອກມາແລ້ວ! ວັນນັ້ນຊ່າງເປັນວັນແຫ່ງຄວາມສຸດແທ້ໆສໍາລັບເພື່ອນສາມຄົນໃນເບັດທານີ ຊ່າງເປັນວັນແຫ່ງຄວາມຍິນດີແທ້

ພີ່ນ້ອງທີ່ຮັກ ວັນນັ້ນໄດ້ເປັນວັນທີ່ແສນຕື່ນເຕັ້ນທີ່ເບັດທານີ ແຕ່ວ່າເຫດການນັ້ນເປັນພຽງແຕ່ພາບອັນນ້ອຍທີ່ສະແດງໃຫ້ເຫັນສະງ່າລາສີແລະຄວາມຕື່ນເຕັ້ນຍິນດີທີ່ຈະມີຂຶ້ນເມື່ອພະເຍຊູສະເດັດມາອີກເທື່ອໜຶ່ງ ແລະທຸກຫລຸມຝັງສົບຂອງຄົນທີ່ຮັບເອົາພະອົງເປັນພະຜູ້ຊ່ອຍໃຫ້ລອດຈະຖືກເປີດອອກມາ ແລະພວກເຂົາຈະຖືກຮັບຂຶ້ນໄປພົບພະອົງໃນອາກາດ

ນີ້ແມ່ນຂໍ້ຄວາມແຫ່ງການປອບປະໂລມທີ່ທ່ານໂປໂລໄດ້ແບ່ງປັນກັບຄຣິສຕຽນໃນຍຸກທໍາອິດ: (1 ເທຊະໂລນິກ 4:13) "ພີ່ນ້ອງທັງຫລາຍເອີຍ, ພວກເຮົາຢາກໃຫ້ເຈົ້າທັງຫລາຍຮູ້ຄວາມຈິງເຣື່ອງຄົນທີ່ຫລັບໄປນັ້ນເພື່ອພວກເຈົ້າຈະບໍ່ໂສກເສົ້າເຫມືອນດັ່ງຄົນອື່ນທີ່ບໍ່ມີຄວາມຫວັງ"

ທ່ານໂປໂລໄດ້ບອກພວກເຮົາກ່ຽວກັບສິ່ງທີ່ພະເຍຊູຈະກະທໍາເມື່ອພະອົງສະເດັດມາຄັ້ງທີສອງ (1 ເທຊະໂລນິກ 4:16) "ດ້ວຍວ່າຈະມີຄໍາສັ່ງອັນດັງ ຈະມີສຽງຂອງອັຄເທວະດາ ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນ"

ທ່ານໂປໂລໄດ້ອະທິບາຍກ່ຽວກັບເຫດການທີ່ຈະເກີດຂຶ້ນເມື່ອພະເຍຊູມາ (1 ໂກຣິນໂທ 15:51-52) "ນີ້ແຫລະ, ເຮົາມີຂໍ້ລັບເລິກບອກພວກເຈົ້າວ່າ ເຮົາທັງຫລາຍຈະບໍ່ລ່ວງຫລັບໄປຫມົດທຸກຄົນ ແຕ່ເຮົາທັງ-ຫລາຍຈະຖືກຊົງປ່ຽນແປງໃຫມ່ຫມົດທຸກຄົນ ໃນຊົ່ວຂະນະດຽວ ໃນພັບຕາດຽວ ເມື່ອເປົ່າແກຄັ້ງສຸດທ້າຍນັ້ນດ້ວຍວ່າຈະມີສຽງແກ ແລະຄົນທີ່ຕາຍແລ້ວຈະຖືກຊົງບັນດານໃຫ້ເປັນຄືນຂຶ້ນມາໂດຍບໍ່ເປື່ອຍເນົ່າ ແລະຝ່າຍພວກເຮົາກໍຈະຖືກຊົງປ່ຽນແປງໃຫມ່" ຫລັງຈາກນັ້ນ ທ່ານໂປໂລໄດ້ກ່າວເຖິງວິທີທີ່ເຮົາຈະຖືກປ່ຽນ (1 ໂກຣິນໂທ 15:53-54) "ເພາະວ່າກາຍທີ່ເປື່ອຍເນົ່ານີ້ຕ້ອງສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຕ້ອງສວມກາຍທີ່ຕາຍບໍ່ເປັນ ແລະເມື່ອໃດກາຍທີ່ຮູ້ຈັກເປື່ອຍເນົ່ານີ້ຈະໄດ້ສວມກາຍທີ່ບໍ່ຮູ້ຈັກເປື່ອຍເນົ່າ ແລະກາຍທີ່ຕາຍເປັນນີ້ຈະໄດ້ສວມກາຍທີ່ຕາຍບໍ່ເປັນ ເມື່ອນັ້ນແຫລະ, ຄວາມທີ່ຂຽນໄວ້ໃນພຣະຄັມພີນັ້ນຈະສຳເຣັດ ຄືວ່າ, ຄວາມຕາຍໄດ້ຕົກເຖິງປະຣາຊັຍແລ້ວ "

ພະເຍຊູໄດ້ກ່າວແກ່ສາວົກຂອງພະອົງວ່າ ທຸກຄົນຈະລຸກຂຶ້ນມາຈາກຫລຸມຝັງສົບ (ໂຢຮັນ 5:28,29) "ຢ່າປລາດໃຈໃນຂໍ້ນີ້ ເພາະໃກ້ຈະເຖິງເວລາທີ່ບັນດາຜູ້ທີ່ຢູ່ໃນຂຸມຝັງສົບຈະໄດ້ຍິນພຣະສຸຣະສຽງຂອງພຣະອົງ ແລະຈະໄດ້ອອກມາ ບັນດາຜູ້ທີ່ໄດ້ເຮັດການດີກໍຄືນສູ່ຊີວິດ ແລະບັນດາຜູ້ເຮັດການຊົ່ວກໍຄືນສູ່ການພິພາກ-ສາ"

ໃຫ້ຢຸດຄິດເບິ່ງຈັກໜຶ່ງນາທີ ຖ້າຫາກວ່າຄົນຕາຍແລ້ວໄປສະຫວັນຫລືນະລົກໂດຍກົງ ເປັນຫຍັງຈະຕ້ອງມີການຟື້ນຄືນຂອງຄົນຊອບທຳແລະຄົນອະທຳ? ເປັນຫຍັງພະເຍຊູຈະກ່າວຂໍ້ຄວາມນີ້ເມື່ອພະອົງສະເດັດກັບມາຄັ້ງທີສອງ?

(ພະນິມິດ 22:12) "ເບິ່ງແມ່ໍ, ເຮົາຈະມາໃນໄວໆນີ້ ເຮົາຈະເອົາບຳເຫນັດຂອງເຮົາມານຳ ເພື່ອຕອບແທນການປະຕິບັດຂອງທຸກຄົນ" ພະຄຳພີຂໍ້ນີ້ໄດ້ກ່າວໄວ້ຢ່າງແຈ່ມແຈ້ງ! ເມື່ອຄົນຕາຍ ພວກເຂົານອນຫລັບໃນຫລຸມຝັງສົບ ແລະພັກຜ່ອນຈາກການງານແລະບັນຫາຕ່າງໆຈົນເວລາທີ່ພະເຍຊສະເດັດມາ
ພະອົງສະເດັດມາເພື່ອຫຍັງ?

ພະອົງສະເດັດມາເພື່ອເຮັດໃຫ້ຄົນທັງຫລາຍທີ່ຮັບເອົາເຄື່ອງບູຊາຂອງພະອົງໃນຖານະຕົວແທນຂອງພວກເຂົາເປັນຄືນມາ ແລະຮວບຮວມພວກເຂົາເຂົ້າກັນ ພະເຍຊູຈະມາຮັບເອົາຄົນທີ່ຕິດຕາມພະອົງດ້ວຍຄວາມສັດຊື່

ໃຫ້ມາຟັງຂ່າວດີນຳກັນ! (1 ເທຊະໂລນິກ 4:17) "ຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ"

ພວກເຮົາໄດ້ຮູ້ແລ້ວວ່າທຸກຄົນທີ່ໄດ້ຮັບຄວາມລອດພົ້ນຈະມີຮູບຮ່າງສະງ່າລາສີເໝືອນຢ່າງພະເຍຊູ ແລະພວກເຂົາຈະມີກາຍອຳມະຕະ ເພື່ອວ່າພວກເຂົາຈະບໍ່ມີບາບ ໄຮ້ຄວາມຕາຍ ແລະມີສະງ່າລາສີຮ່ວມກັບພະຜູ້ເປັນເຈົ້າຕະຫລອດໄປ

ບາງຄົນອາດເວົ້າວ່າ ແລ້ວໂຈນສອງຄົນທີ່ໄມ້ກາງແຂນນັ້ນເດ? ໃຫ້ມາເບິ່ງນຳກັນວ່າພະຄຳພີກ່າວແນວໃດກ່ຽວກັບຄຳສັນຍາທີ່ພະເຍຊູໄດ້ໃຫ້ແກ່ລາວ. ພະເຍຊູໄດ້ຖືກຕຶງຢູ່ລະຫວ່າງໂຈນສອງຄົນ ແລະພວກເຂົາກໍອາດຈະຄິດວ່າພະເຍຊູຄົງເປັນຜູ້ກໍ່ການຮ້າຍແນ່ນອນ ໜັງສືມາຣະໂກໄດ້ກ່າວວ່າ ໃນຕອນທຳອິດໂຈນສອງຄົນເວົ້າສຽດສີພະອົງ ໂດຍເວົ້າວ່າ ຖ້າພະອົງມີອຳນາດພະອົງກໍໜ້າຈະຊ່ອຍພະອົງແລະພວກເຂົາໃຫ້ລົງຈາກໄມ້ກາງແຂນໄດ້. ຫລັງຈາກນັ້ນໂຈນຄົນໜຶ່ງໄດ້ກັບໃຈ ແລະຮ້ອງຫາຄວາມລອດ ໂດຍກ່າວວ່າ (ລູກາ 23:42,43) “ພຣະເຢຊູເອີຍ, ເມື່ອໃດທ່ານມາໃນແຜ່ນດິນຂອງທ່ານ ຂໍຈົ່ງລະນຶກເຖິງຂ້ານ້ອຍແດ່” ພຣະອົງຊົງຕອບວ່າ, “ເຮົາບອກທ່ານຕາມຈິງວ່າ ວັນນີ້ທ່ານຈະຢູ່ກັບເຮົາໃນທີ່ສຸຂເສີມ”

ພະເຍຊູໄດ້ໝາຍຄວາມວ່າ ໃນມື້ນັ້ນພະອົງກັບໂຈນຈະໄດ້ຢູ່ໃນທີ່ສຸຂະເສີມບໍ່? ຫລື ພະເຍຊູໄດ້ສັນຍາ ວ່າພະອົງແລະໂຈນຈະຢູ່ໃນທີ່ສຸຂະເສີມເມື່ອພະອົງລົງມາຕັ້ງອານາຈັກຂອງພະອົງເທິງໂລກນີ້ ຂໍ້ພະຄຳພີນີ້ໃນພາສາກຣີກບໍ່ໄດ້ມີໝາຍຈຸດໝາຍຈໍ້າຫຍັງ ຫລາຍສັດຕະວັດຕໍ່ມາ ເຄື່ອງໝາຍຈຸດໝາຍຈໍ້າໄດ້ຖືກເພີ່ມເຂົ້າໃນພະຄຳພີ

ໃຫ້ເຮົາມາເບິ່ງນຳກັນວ່າ ຖ້າເຮົາມີການຍ້າຍບ່ອນຂອງໝາຍຈຸດ ຫລືຄຳວ່າ “ວ່າ” ຄວາມໝາຍຂອງສິ່ງພະເຍເວົ້າຈະມີການປ່ຽນແປງແນວໃດ “ເຮົາລອກທ່ານຕາມຄວາມຈິງໃນວັນນີ້ວ່າ, ທ່ານຈະຢູ່ກັບເຮົາໃນທີ່ສຸຂະເສີມ” ຄຳວ່າ “ວັນນີ້” ແມ່ນໝາຍເຖິງວັນທີ່ພະເຍຊູໄດ້ກ່າວ ມັນບໍ່ໄດ້ໝາຍເຖິງວັນທີ່ໂຈນຈະໄດ້ຢູ່ໃນທີ່ສຸຂະເສີມຫລືໃນສະຫວັນ ໃຫ້ເຮົາມາເບິ່ງຫລັກຖານໃນພະຄຳພີນຳກັນອີກ

ກ່ອນອື່ນໝົດ ໃຫ້ມາຕັ້ງຄຳຖາມນຳກັນວ່າ: ພະເຍຊູໄດ້ຂຶ້ນສະຫວັນໃນວັນນັ້ນເລີຍຫລືບໍ່? ພະຄຳພີໄດ້ບອກພວກເຮົາວ່າ ພະອົງໄດ້ສິ້ນພະຊົນໃນວັນນັ້ນ, ວັນສຸກ, ແລະໄດ້ຖືກບັນຈຸໄວ້ໃນອຸໂມງ ໃນເຊົ້າວັນອາ-ທິດ ພະເຍຊູໄດ້ປາກົດຕໍ່ມາຣີອາ ແລະນາງກໍຢາກນະມັດສະການພະອົງ ແຕ່ພະອົງຫ້າມນາງໄວ້ ເພາະວ່າພະອົງຍັງບໍ່ໄດ້ຂຶ້ນເມືອສະຫວັນເທື່ອ ໃຫ້ເຮົາມາຟັງສິ່ງທີ່ພະອົງໄດ້ກ່າວ (ໂຢຮັນ 20:17) “ຢ່າຊູ່ຫນ່ວງດຶງເຮົາ ເພາະເຮົາຍັງບໍ່ໄດ້ຂຶ້ນເມືອຫາພຣະບິດາຂອງເຮົາ ...” ພະອົງກ່າວຂໍ້ຄວາມນີ້ໃນເຊົ້າວັນອາທິດ ພະອົງກ່າວວ່າ ພະອົງຍັງບໍ່ທັນຂຶ້ນເມືອຫາພະບິດາຂອງພະອົງເທື່ອ! ສະແດງວ່າໃນວັນສຸກພະອົງຍັງບໍ່ໄດ້ຂຶ້ນໄປສະຫວັນເທື່ອ!

ພະຄຳພີໄດ້ບອກພວກເຮົາໃຫ້ຮູ້ວ່າ ໃນວັນສຸກໂຈນກໍຍັງບໍ່ໄດ້ຂຶ້ນໄປສະຫວັນເຊັ່ນກັນ ໂຢຮັນ 19:31-33 ໄດ້ກ່າວວ່າ (ໂຢຮັນ 19:31-33) "...ທັງນີ້ກໍເພາະເປັນວັນຈັດແຈງແລະເຂົາບໍ່ຢາກໃຫ້ສົບນັ້ນຄ້າງຢູ່ທີ່ໄມ້ກາງແຂນໃນວັນສະບາໂຕ (ເພາະວັນສະບາໂຕນັ້ນເປັນວັນໃຫຍ່)ດັ່ງນັ້ນພວກທະຫານຈຶ່ງທຸບຂາຜູ້ທີ່ນຶ່ງແລະຜູ້ທີ່ສອງຊຶ່ງ ຖືກຄຶງໄວ້ພ້ອມ ແຕ່ເມື່ອເຂົາມາເຖິງພຣະເຢຊູ ແລະເຫັນວ່າພຣະອົງສິ້ນພຣະຊົນແລ້ວເຂົາຈຶ່ງບໍ່ໄດ້ທຸບພຣະອຸຣຸຂອງພຣະອົງ"

ໃນທີ່ນີ້ພວກເຮົາໄດ້ເຫັນວ່າ ພວກເຂົາຫັກຂາຂອງໂຈນເພື່ອບໍ່ໃຫ້ໂຈນໜີໄປໄດ້ ແຕ່ພວກເຂົາບໍ່ໄດ້ຫັກຂາຂອງພະເຍຊູເພາະວ່າພະອົງໄດ້ສິ້ນພະຊົນໃນວັນສຸກລຽບລ້ອຍແລ້ວ
ເພາະສະນັ້ນ ທັງພະຄຣິດແລະໂຈນ ບໍ່ມີໃຜໄດ້ຢູ່ໃນທີ່ສຸຂະເສີມໃນວັນສຸກ.
ຫລັກຖານໃນທີ່ນີ້ແມ່ນແຈ່ມແຈ້ງຫລາຍ ເຂົາໄດ້ເອົາເຄື່ອງໝາຍຈຸດໃສ່ຜິດບ່ອນ ແລະພະຄຳພີໃນພາສາລາວເຮົາກໍແປຜິດອອກມາ

ພະຄຣິດໄດ້ຈ່າຍຄ່າໄຖ່ ແລະຄ່າເອີ້ນກັບຄືນຂອງພວກເຮົາ ຂອງປະທານທີ່ຍິ່ງໃຫຍ່ທີ່ສຸດທີ່ພະເຈົ້າສາມາດມອບໃຫ້ມວນມະນຸດຄືຊີວິດນິລັນ ນັ້ນຄື ໄຊຊະນະເໜືອຄວາມຕາຍ! ສິ່ງໃດໆກໍບໍ່ມີຄ່າຖ້າບໍ່ມີຊີວິດນິລັນ ຖ້າເຮົາຮັບເອົາຊີວິດນິລັນ ຊີວິດນິລັນກໍເປັນຂອງເຮົາ!

ການຕັດສິນໃຈຂອງພີ່ນ້ອງໃນເທື່ອນີ້ແມ່ນສຳຄັນກວ່າການຕັດສິນໃຈໃດທີ່ພີ່ນ້ອງເຄີຍມີ ຊີວິດນິລັນໃນອະນາຄົດແມ່ນຂຶ້ນກັບການຕັດສິນໃຈຂອງພີ່ນ້ອງ! ຂອງປະທານແຫ່ງຊີວິດນິລັນອັນຫາຄ່າບໍ່ໄດ້ແມ່ນໄດ້ຖືກສັນຍາວ່າວ່າຈະປະທານໃຫ້ທຸກຄົນທີ່ຮັບເອົາພະຄຣິດໃຫ້ເປັນພະຜູ້ຊ່ອຍໃຫ້ລອດຂອງພະຜູ້ເປັນເຈົ້າຂອງພວກເຂົາ ຂໍໃຫ້ພີ່ນ້ອງມອບຈິດມອບໃຈຂອງພີ່ນ້ອງໃຫ້ພະອົງ ໃຫ້ພະອົງທຳຄວາມສະອາດແລະປ່ຽນແປງຈິດໃຈນີ້ ຫົວທີ່ຍິ່ງທະນົງແລະເຫັນແກ່ໂຕຈະຖືກປ່ຽນແປງໃໝ່ດ້ວຍໄມ້ກາງແຂນ ທີ່ຄາວາຣີພະຄຣິດໄດ້ເຮັດໃຫ້ທຸກສິ່ງເປັນໄປໄດ້ ແລ້ວມີຫຍັງອີກແດ່ ທີ່ພີ່ນ້ອງຢາກໃຫ້ພະອົງກະທຳຫລາຍໄປກວ່ານີ້?

ຖ້າພີ່ນ້ອງມີຄວາມຕ້ອງການຢ່າງພຽງພໍ ຊີວິດນິລັນກໍຈະເປັນຂອງພີ່ນ້ອງ ເພາະວ່າຕອນນີ້ພະອົງຍັງຊົງພະຊົນຢູ່ ພວກເຮົາຈຶ່ງມີຄວາມຫວັງອັນສະຫງ່າ ຄວາມຫວັງທີ່ຢູ່ເໜືອຫລຸມຝັງສົບ!